ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
*****

ທະນາຄານແຫ່ງ ສ.ປ.ປ. ລາວ

ກົມຄຸ້ມຄອງສະຖາບັນການເງິນ

ເລກທີ 1038/ກຄສງ
ນະຄອນຫຼວງວຽງຈັນ, ວັນທີ 24 JUL 2014

## ເງື່ອນໄຂ ແລະ ການປະກອບເອກະສານ ຂໍອະນຸຍາດດຳເນີນທຸລະກິດ ແລະ ການຂະຫຍາຍສາຂາ ຂອງ ບໍລິສັດ ເຊົ່າສິນເຊື່ອ

- ອີງຕາມ ດຳລັດວ່າດ້ວຍ ການເຊົ່າສິນເຊື່ອ ສະບັບເລກທີ 11/ນຍ, ລົງວັນທີ 18 ກຸມພາ 1999.

ກົມຄຸ້ມຄອງສະຖາບັນການເງິນ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບກ່ຽວກັບເງື່ອນໄຂ ແລະ ການປະກອບເອກະສານ ຂໍອະນຸຍາດດຳເນີນທຸລະກິດ ແລະ ການຂະຫຍາຍສາຂາ ຂອງ ບໍລິສັດ ເຊົ່າສິນເຊື່ອ ຊຶ່ງມີລາຍລະອຽດດັ່ງນີ້:

## I. ເງື່ອນໄຂ ແລະ ການປະກອບເອກະສານ ຂໍອະນຸຍາດດຳເນີນທຸລະກິດ ບໍລິສັດ ເຊົ່າສິນເຊື່ອ.

### 1. ເງື່ອນໄຂ:

1) ບຸກຄົນ ຫຼື ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຢາກຂໍອະນຸຍາດດຳເນີນທຸລະກິດເຊົ່າສິນເຊື່ອ ຈະຕ້ອງໄດ້ສ້າງຕັ້ງວິສາຫະກິດໃນຮູບແບບບໍລິສັດຈຳກັດ ທີ່ມີຜູ້ຖືຮຸ້ນລິເລີ່ມຢ່າງໜ້ອຍ 2 ຂາຮຸ້ນ ຂຶ້ນໄປ ແຕ່ສູງສຸດບໍ່ໃຫ້ເກີນ 30 ຂາຮຸ້ນ, ຊຶ່ງໃນນັ້ນຜູ້ຖືຮຸ້ນຢ່າງໜ້ອຍໜຶ່ງຄົນ ຕ້ອງມີປະສົບການທາງດ້ານບໍລິຫານການເງິນ ໂດຍປະກອບສຳນວນຄຳຮ້ອງຍື່ນສະເໜີຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າຂັ້ນສູນກາງ ຫຼື ແຂວງ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ;
2) ສຳລັບຜູ້ລົງທຶນຕ່າງປະເທດ ທີ່ລົງທຶນໃນຮູບແບບຮຸ້ນສ່ວນ ລະຫວ່າງຜູ້ຖືຮຸ້ນພາຍໃນ ກັບ ຕ່າງປະເທດ ຕ້ອງປະກອບທຶນຢ່າງໜ້ອຍບໍ່ໃຫ້ຫຼຸດ ສິບສ່ວນຮ້ອຍ (10%) ຂອງທຶນທັງໝົດ;
3) ມີທຶນຈົດທະບຽນຕ່ຳສຸດ ຫ້າຮ້ອຍລ້ານກີບ ຫຼື ຕາມການປ່ຽນແປງຂອງ ທະນາຄານແຫ່ງ ສປປ ລາວ ແຕ່ລະໄລຍະ;
4) ເອກະສານຢັ້ງຢືນຖານະການເງິນ (Bank Statement) ຂອງຜູ້ຖືຮຸ້ນທີ່ສະແດງ ໃຫ້ເຫັນຄວາມພຽງພໍຂອງທຶນ;
5) ມີໂຄງປະກອບການຈັດຕັ້ງ ຊຶ່ງປະກອບດ້ວຍ: ກອງປະຊຸມໃຫຍ່ຜູ້ຖືຮຸ້ນ, ສະພາບໍລິຫານ, ຜູ້ອຳນວຍການ ພ້ອມທັງກຳນົດຕຳແໜ່ງງານເປັນແຕ່ລະພະແນກຢ່າງຊັດເຈນ;
6) ກໍລະນີເປັນຄົນຕ່າງປະເທດ ຕ້ອງມີເອກະສານຢັ້ງຢືນເຫັນດີຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງຂອງປະເທດຕົນ.

### 2. ການປະກອບເອກະສານ:

1) ຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດຕາມແບບພິມຂອງທະນາຄານແຫ່ງ ສປປ ລາວ ທີ່ກຳນົດໄວ້ໃນແຕ່ລະໄລຍະ;